ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ພິທີມອບໃບຍັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2021

## ກົມຄຸ້ມຄອງລະບົບຊຳລະ ແລະ ສຳນັກງານປ້ອງປົກເງິນຝາກ




ໃນຕອນບ່າຍຂອງວັນທີ 16 ມິຖຸນາ 2022 ໄດ້ມີພິທີມອບໃບຍັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2021 ຢູ່ທີ່ຫ້ອງປະຊຸມໃຫຍ່ຊັ້ນ VI ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ. ໂດຍການໃຫ້ກຽດເຂົ້າຮ່ວມຂອງ ສະຫາຍ ພຸດທະໄຊ ສີວິໄລ ກຳມະການປະຈຳພັກ ທຫລ, ຮອງຜູ້ວ່າການ ທຫລ. ໄດ້ມີຄະນະກົມ, ຄະນະພະແນກ ແລະ ສະມາຊິກພັກຂອງກົມຄຸ້ມຄອງລະບົບຊຳລະ (ຄລຊ) ແລະ ສຳນັກງານປ້ອງປົກເງິນຝາກ (ສປງ) ເຂົ້າຮ່ວມ.

ໃນພິທີດັ່ງກ່າວ ສະຫາຍ ສຸລິສັກ ທຳນຸວົງ ເລຂາໜ່ວຍພັກ ຄລຊ ໄດ້ຜ່ານບົດສະຫຼຸບຕີລາຄາການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2021 ໂດຍສັງເຂບ; ໃນນີ້ຕາງໜ້າກົມຈັດຕັ້ງແລະພະນັກງານ ໄດ້ຂຶ້ນຜ່ານຂໍ້ຕົກລົງຂອງຄະນະພັກ ທຫລ ວ່າດ້ວຍການຮັບຮອງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2021; ຫຼັງຈາກນັ້ນ ສະຫາຍ ພຸດທະໄຊ ສີວິໄລ ກຳມະການປະຈຳພັກ ທຫລ, ຮອງຜູ້ວ່າການ ທຫລ ໄດ້ມອບໃບຍັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2021 ໃຫ້ເລຂາໜ່ວຍພັກ ຄລຊ ແລະ ສປງ.






ສະຫາຍ ພຸດທະໄຊ ສີວິໄລ ກຳມະການປະຈຳພັກ ທຫລ, ຮອງຜູ້ວ່າການ ທຫລ ໄດ້ມີຄຳເຫັນໂອ້ລົມຕໍ່ພິທີດັ່ງກ່າວວ່າ ເຊິ່ງໄລຍະເວລາທີ່ທົ່ວພັກ, ທົ່ວປວງຊົນລາວທັງຊາດ ພວມສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກເຂົ້າໃນຂົງເຂດວຽກງານ ກໍ່ຄືການປະຕິບັດວາລະແຫ່ງຊາດຕິດພັນກັບການແກ້ໄຂສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຢ່າງເປັນຂະບວນພົດຟື້ນ ເວົ້າລວມ, ເວົ້າສະເພາະຂະແໜງການທະນາຄານຂອງພວກເຮົາກໍ່ພວມອອກແຮງຢ່າງຕັ້ງໜ້າເພື່ອສືບຕໍ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ IV ຂອງອົງຄະນະພັກ ທຫລ ກໍຄືຜັນຂະຫຍາຍຍຸດທະສາດການພັດທະນາລະບົບສະຖາບັນການເງິນ-ເງິນຕາ ໃຫ້ເປັນແຜນງານ-ໂຄງການ 5 ປີໃນຕໍ່ໜ້າ (2021-2025) ໃຫ້ປະກົດຜົນເປັນຈິງ. ສະຫາຍ ພຸດທະໄຊ ສີວິໄລ ກຳມະການປະຈຳພັກ ທຫລ, ຮອງຜູ້ວ່າການ ທຫລ ໄດ້ເນັ້ນໜັກຕື່ມບາງບັນຫາ ໃຫ້ສືບຕໍ່ເປັນເຈົ້າການຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນບັນດາເນື້ອໃນຂອງນິຕິກຳທີ່ຕິດພັນກັບວຽກງານເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ເລິກເຊິ່ງ; ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ຖັນແຖວສະມາຊິກພັກ-ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ເປັນປົກກະຕິ; ເພີ່ມທະວີວຽກງານປັບປຸງກໍ່ສ້າງພັກ ແລະ ຂະຫຍາຍພັກໃຫ້ຮັບປະກັນທາງດ້ານຄຸນນະພາບເພື່ອເປັນກຳລັງແຮງຂັບເຄື່ອນວຽກງານໜ່ວຍພັກ.



# ຂາວ-ພາບ: ນ. ທິດສະບາ ທຳມະວົງສິງ

*ຮັກບ້ານເກີດເມືອງນອນໃຊ້ຈ່າຍທອນເປັນເງິນກີບ*